# ພັນທະສັນຍາຄຳອະທິຖານ
## ສຳລັບຫລານນ້ອຍ

**ພຣະຄຸນ**
ພຣະບິດາໃນສະຫວັນ,ຂອບຄຸນພຣະອົງທີ່ຮັກຂ້ານ້ອຍ
ແລະເຮັດໃຫ້ຂ້ານ້ອຍເປັນລູກທີ່ຮັກຂອງພຣະອົງ

**ຄວາມຮັກ**
ໂຜດຊົງຊ່ວຍໃຫ້ຂ້ານ້ອຍຮັກແລະເຊື່ອຟັງພຣະອົງ

**ຄວາມເຫັນອົກເຫັນໃຈ**
ໂຜດຊ່ວຍໃຫ້ຂ້ານ້ອຍໄດ້ຮັກຄົນອື່ນ
ແບບທີ່ພຣະອົງຊົງຮັກຂ້ານ້ອຍ

**ການສຳນຶກບາບ**
ຂ້ານ້ອຍຂໍການອະໄພຈາກຄວາມຜິດບາບ
ຂອງຂ້ານ້ອຍ ຂໍຊົງຊຳລະຂ້ານ້ອຍໃຫ້ສະອາດ

**ການນະມັດສະການ**
ຂ້ານ້ອຍຂໍສັນລະເສີນພຣະອົງໝົດທັງຫົວໃຈ!

**ການອຸທິດຕົນ**
ຂ້າແດ່ພຣະເຢຊູຄຣິດເຈົ້າ ຂ້ານ້ອຍຕ້ອງການຕິດຕາມ
ພຣະອົງຜູ້ເປັນອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍ
ຂໍຊົງປ່ຽນແປງຂ້ານ້ອຍຕາມນ້ຳພຣະໄທຂອງພຣະອົງ

**ການເພິ່ງພາ**
ຂໍຊົງເຕີມຂ້ານ້ອຍດ້ວຍພຣະວິນຍານບໍລິສຸດເຈົ້າແລະ
ເປີດເຜີຍແຜນການຂອງພຣະອົງໃຫ້ຂ້ານ້ອຍຮູ້ແຈ້ງ

**ອິດທິພົນ**
ຂໍຊົງໃຊ້ຂ້ານ້ອຍໃຫ້ນຳພຣະຄຸນ,ຄວາມຈິງ,
ຄວາມຍຸຕິທຳຂອງພຣະອົງໄປສູ່ຜູ້ອື່ນ

**ການສ້າງສາວົກ**
ຂໍຊົງໃຊ້ຂ້ານ້ອຍເພື່ອປະກາດພຣະສິລິແລະຊ່ວຍໃຫ້
ຜູ້ອື່ນໄດ້ຕິດຕາມພຣະອົງ

**ສິດອຳນາດ**
ຂໍອະທິຖານໃນພຣະນາມພຣະເຢຊູຄຣິດເຈົ້າ
ອາແມນ

**ຕິດຕາມພຣະເຢຊູຄຣິດເຈົ້າໄປນຳກັນ**
theprayercovenant.org/children

# ຈົດຈຳຂໍ້ພຣະຄຳພີ

**ຄຳອຸປະມາເລື່ອງແກະທີ່ເສຍໄປ · ລູກາ15:1-7** | ເບິ່ງແມ,ພຣະບິດາຊົງໂຜດປະທານຄວາມຮັກແກ່ເຮົາທັງຫລາຍເປັນຢ່າງໃດທີ່ພຣະເຈົ້າຊົງເອີ້ນພວກເຮົາວ່າບຸດຂອງພຣະອົງ –1ໂຢຮັນ3:1

**ເລື່ອງລາວຂອງອັບຣາຮາມ · ປະຖົມມະການ 12:1-5** | ຈົ່ງຮັກອົງພຣະຜູ້ເປັນເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ ແລະດ້ວຍສຸດຄວາມຄິດຂອງເຈົ້າ ນັ້ນແຫຼະເປັນກົດບັນຍັດຂໍ້ໃຫຍ່ແລະຂໍ້ຕົ້ນ –ມັດທິວ 22:37-38

**ໄທຊະມາເຣຍຜູ້ໃຈດີ · ລູກາ 10:25-37** | "ນີ້ແຫລະ, ເປັນຂໍ້ບັນຍັດຂອງເຮົາຄືໃຫ້ທ່ານທັງຫລາຍຮັກກັນແລະກັນເຫມືອນດັ່ງເຮົາໄດ້ຮັກພວກທ່ານ –ໂຢຮັນ15:12

**ຄຳອຸປະມາເລື່ອງຂ້າທາດທີ່ບໍ່ຍອມໃຫ້ອະໄພ · ມັດທາຍ18:21-35** | ຂໍຊົງຊຳລະຄວາມຊົ່ວຂອງຂ້ານ້ອຍໃຫ້ສູນສິ້ນໄປແລະເຮັດໃຫ້ຂ້ານ້ອຍຂາວສະອາດຈາກຄວາມຜິດຂອງຂ້ານ້ອຍ –ເພງສັນລະເສີນ 51:2

**ເລື່ອງລາວພຣະກຳເນີດ · ລູກາ 2:1-20** | ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂ້ານ້ອຍຈະໂມທະນາຂອບພຣະຄຸນດ້ວຍຫມົດຫົວໃຈຂອງຂ້ານ້ອຍຂ້ານ້ອຍຈະບອກເຖິງສິ່ງຍິ່ງໃຫຍ່ທັງຫມົດຊຶ່ງພຣະອົງໄດ້ກະທຳ –ເພງສັນລະເສີນ 9:1

**ເປໂຕປະຕິເສດພຣະເຢຊູ · ລູກາ 22:54-62** | ຖ້າຜູ້ໃດຕ້ອງການຕິດຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເອງ ຮັບແບກໄມ້ກາງແຂນຂອງຕົນທຸກໆວັນແລະຕາມເຮົາມາ –ລູກາ 9:23

**ພຣະສັນຍາເລື່ອງພຣະວິນຍານບໍລິສຸດ · ໂຢຮັນ 14:15-31** | ຈົ່ງເຕັມລົ້ນດ້ວຍພຣະວິນຍານບໍລິສຸດເຈົ້າ –ເອເຟໂຊ 5:18ຂ

**ພຣະເຢຊູແລະເດັກນ້ອຍ · ມັດທາຍ 18:1-6** | ເຮົາທັງຫລາຍໄດ້ເຫັນສະຫງ່າຣາສີຂອງພຣະອົງ ຄື ສະຫງ່າຣາສີທີ່ສົມກັບພຣະບຸດອົງດຽວຂອງພຣະບິດາບໍລິບູນດ້ວຍພຣະຄຸນແລະຄວາມຈິງ –ໂຢຮັນ 1:14

**ໂຊໂລກັບໃຈ · ກິດຈະການ 9:1-22** | ເຫດສະນັ້ນພວກເຈົ້າຈົ່ງອອກໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາ ໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດເຈົ້າ –ມັດທາຍ 28:19

**ຊົງໂຜດບາຣະຕິມາຍທີ່ຕາບອດ · ມາຣະໂກ 10:46-52** | ເຫດສະນັ້ນ ພຣະເຈົ້າຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສູງສຸດ ແລະໄດ້ຊົງປະທານພຣະນາມນັ້ນຊຶ່ງຢູ່ເໜືອນາມທັງປວງໃຫ້ແກ່ພຣະອົງ –ຟີລິບປອຍ 2:9

©2019 The Prayer Covenant Inc. All rights reserved